DATE: January 26, 2022

Medi-Cal Eligibility Division Information Letter No.: I 22-02

TO: ALL COUNTY WELFARE DIRECTORS
ALL COUNTY ADMINISTRATIVE OFFICERS
ALL COUNTY MEDI-CAL PROGRAM SPECIALISTS/LIAISONS

SUBJECT: OLDER ADULT EXPANSION AND ASSET LIMIT CHANGES GLOBAL OUTREACH LANGUAGE

The purpose of this Medi-Cal Eligibility Division Information Letter (MEDIL) is to provide counties with global outreach language related to the Older Adult Expansion and changes to the asset limits for Non-MAGI Medi-Cal, for immediate use. The goal of the outreach language is to inform beneficiaries and prospective applicants of upcoming changes to Medi-Cal which will expand eligibility for full scope Medi-Cal to all individuals who are 50 years of age or older who meet all Medi-Cal eligibility criteria and immigration status does not matter. Additionally, the outreach language provides information to counties, beneficiaries, and applicants on increased limits on net, non-exempt assets in order to inform choices about applying for Medi-Cal.

**Background**

The global outreach language includes messaging that can be used in various forms of outreach including social media posts, call scripts, and county website content. While counties are not required to utilize this language, the Department of Health Care Services (DHCS) highly recommends counties utilize this messaging and integrate it into their outreach and social media campaigns. Counties may modify the global outreach language to meet any business need in utilizing the language; however, the intent of the language must remain the same to retain consistency in messaging.

DHCS is sharing the global outreach language broadly for use by Medi-Cal Managed Care Plans, other State departments, Medi-Cal providers, and other community partners for use in their outreach activities.

If you have any questions or require additional information, please contact:

- Jillian Davis by phone at (916) 345-8172 or by email at Jillian.Davis@dhcs.ca.gov
- Daniela Gutierrez by phone at (916) 345-8501 or by email at Daniela.Gutierrez@dhcs.ca.gov.

**ORIGINAL SIGNED BY**

Sandra Williams, Chief
Medi-Cal Eligibility Division

Enclosures

DEPARTMENT OF HEALTH CARE SERVICES

## Global Language and Messaging Snippets

| Flyer/Insert Snippet |
|---|

ຮຽນສະມາຊິກ ຫຼື ຜູ້ສະໝັກ Medi-Cal,

ມີການປ່ຽນແປງໃນໂຄງການ Medi-Cal ສໍາລັບຜູ້ສູງອາຍຸ ແລະ ຄົນພິການ ເຊິ່ງເຮັດໃຫ້ອີກຫຼາຍຄົນສາມາດໄດ້ຮັບການຄຸ້ມຄອງຈາກ Medi-Cal. ການປ່ຽນແປງເຫຼົ່ານີ້ຍັງຈະເຮັດໃຫ້ຜູ້ຄົນຮັກສາຊັບສິນໄດ້ຫຼາຍຂຶ້ນ ເມື່ອພວກເຂົາມີ Medi-Cal.

**Older Adult Expansion**
Older Adult Expansion ຈະມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ພຶດສະພາ 2022. ການເພີ່ມຂອບເຂດຈະຂະຫຍາຍເກນເງື່ອນໄຂສໍາລັບ full scope Medi-Cal ແກ່ທຸກຄົນທີ່ອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນ ເຊິ່ງເປັນຄົນທີ່ເຂົ້າເກນເງື່ອນໄຂທັງໝົດຂອງ Medi-Cal ແລະ ສະຖານະຄົນເຂົ້າເມືອງຈະບໍ່ສໍາຄັນ. ຖ້າທ່ານມີ restricted scope Medi-Cal ທີ່ເປີດໃຊ້ງານໃນເດືອນພຶດສະພາ 2022, ທ່ານຈະຖືກປ່ຽນເປັນ full scope Medi-Cal ໂດຍອັດຕະໂນມັດ. ຖ້າທ່ານໄດ້ຮັບແຈ້ງການຕໍ່ອາຍຸ, ກະລຸນາຕື່ມຂໍ້ມູນ ແລະ ສົ່ງຄືນໃຫ້ສໍານັກງານເຂດປົກຄອງ ເພື່ອວ່າຈະໄດ້ດໍາເນີນການໂດຍບໍ່ຊັກຊ້າ.

ຖ້າທ່ານບໍ່ມີ restricted scope Medi-Cal ທີ່ເປີດໃຊ້ງານ, ທ່ານສາມາດສະໝັກຂໍ Medi-Cal ທາງອອນລາຍ, ທາງໄປສະນີ, ທາງໂທລະສັບ, ໃນສານັກງານເຂດປົກຄອງໃນທ້ອງຖິ່ນຂອງທ່ານ, ທາງແຟັກ ຫຼື ດ້ວຍຕົນເອງ. ຖ້າທ່ານເຂົ້າເກນເງື່ອນໄຂສາລັບ full scope Medi-Cal ຕາມ Older Adult Expansion, ທ່ານຈະໄດ້ຮັບແຈ້ງການທີ່ລະບຸວ່າທ່ານເຂົ້າເກນເງື່ອນໄຂສໍາລັບ full scope Medi-Cal ແລະ ວັນທີເລີ່ມມີຜົນບັງຄັບໃຊ້ ເຊິ່ງຈະເປັນວັນທີ 1 ພຶດສະພາ 2022 ຫຼື ຫຼັງຈາກນັ້ນ.

**ການປ່ຽນແປງໃນຂີດຈໍາກັດຊັບສິນ**
ໃນວັນທີ 1 ກໍລະກົດ 2022, ຂີດຈໍາກັດຊັບສິນໃນໂຄງການ Medi-Cal ສໍາລັບຜູ້ຄົນທີ່ມີອາຍຸ 65 ປີ ຫຼື ຫຼາຍກວ່ານັ້ນ ຫຼື ຄົນພິການແມ່ນຈະມີຈໍານວນຫຼາຍຂຶ້ນ. ການປ່ຽນແປງເຫຼົ່ານີ້ມີຜົນໃຊ້ໄດ້ກັບສິ່ງຂອງທີ່ທ່ານຄອບຄອງ ເຊິ່ງຈະຖືກພິຈາລະນາໃນເກນເງື່ອນໄຂຂອງ Medi-Cal. ລາຍການເຫຼົ່ານີ້ປະກອບດ້ວຍບັນຊີທະນາຄານ, ເງິນສົດ, ພາຫະນະມີສອງ ແລະ ເຮືອນ ແລະ ຊັບພະຍາກອນທາງດ້ານການເງິນໃນຮູບແບບອື່ນໆ. ຂີດຈໍາກັດທີ່ຜ່ານມາແມ່ນ $2,000 ສໍາລັບໜຶ່ງຄົນ ແລະ $3,000 ສໍາລັບສອງຄົນ. ຂີດຈາກັດໃໝ່ $130,000 ສໍາລັບໜຶ່ງຄົນ ແລະ ອີກ $65,000 ສໍາລັບສະມາຊິກເພີ່ມເຕີມແຕ່ລະຄົນໃນຄອບຄົວ. ຖ້າທ່ານເຊື່ອວ່າທ່ານອາດມີສິດໄດ້ຮັບ Medi-Cal ຫຼັງຈາກທີ່ຂີດຈໍາກັດໃໝ່ເລີ່ມຕົ້ນຂຶ້ນ, ທ່ານກໍ່ຄວນສະໝັກ. ຖ້າທ່ານຢູ່ໃນໂຄງການ Medi-Cal ແລ້ວ ເຊິ່ງມີຂີດຈໍາກັດຊັບສິນ, ທ່ານຈະສາມາດຮັກສາຊັບສິນໄດ້ຫຼາຍກວ່າແຕ່ກ່ອນ. ກະລຸນາຕິດຕໍ່ສານັກງານ Medi-Cal ໃນເຂດປົກຄອງທ້ອງຖິ່ນຂອງທ່ານ ຖ້າທ່ານມີຄໍາຖາມໃດໜຶ່ງ.

**ມີຄໍາຖາມບໍ?**
ຖ້າທ່ານມີຄໍາຖາມໃດໜຶ່ງ ຫຼື ຖ້າການສະໝັກ Medi-Cal ຂອງທ່ານຖືກປະຕິເສດ, ກະລຸນາຕິດຕໍ່ສໍານັກງານເຂດປົກຄອງທ້ອງຖິ່ນຂອງທ່ານ. ຊອກຫາສໍານັກງານເຂດປົກຄອງທ້ອງຖິ່ນຂອງທ່ານໃນທີ່ນີ້: http://dhcs.ca.gov/COL.

**DEPARTMENT OF HEALTH CARE SERVICES**

| Website Text for County Office |
|---|
| ມີການປ່ຽນແປງໃນໂຄງການ Medi-Cal ສຳລັບຜູ້ສູງອາຍຸ ແລະ ຄົນພິການ ເຊິ່ງເຮັດໃຫ້ອີກຫຼາຍຄົນສາມາດໄດ້ຮັບການຄຸ້ມຄອງຈາກ Medi-Cal. ຜູ້ຢູ່ອາໄສໃນລັດ California ທີ່ມີອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນທີ່ເຂົ້າເກນເງື່ອນໄຂທັງໝົດຂອງ Medi-Cal ຈະສາມາດໄດ້ຮັບ full scope Medi-Cal ແລະ ສະຖານະຄົນເຂົ້າເມືອງຈະບໍ່ສຳຄັນ. ຄົນອື່ນຈະສາມາດຮັກສາຊັບສິນໄດ້ຫຼາຍຂຶ້ນ (ເຊັ່ນ: ເງິນໃນບັນຊີກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດ) ໃນຂະນະທີ່ຢູ່ໃນ Medi-Cal. |

| Website Banner |
|---|
| ສຳຄັນ**:** ການປ່ຽນແປງໃນກົດລະບຽບຂອງ Medi-Cal ກຳລັງຈະມີຜົນບັງຄັບໃຊ້! Medi-Cal ຈະເປີດໃຫ້ບໍລິການແກ່ທຸກຄົນທີ່ອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນ ເຊິ່ງເປັນຄົນທີ່ເຂົ້າເກນເງື່ອນໄຂທັງໝົດຂອງ Medi-Cal ແລະ ສະຖານະຄົນເຂົ້າເມືອງຈະບໍ່ສຳຄັນ.<br>ການປ່ຽນແປງເຫຼົ່ານີ້ຍັງຈະເຮັດໃຫ້ຜູ້ຄົນຮັກສາຊັບສິນໄດ້ຫຼາຍຂຶ້ນ ແລະ ມີສິດສຳລັບ Medi-Cal.<br>ສອບຖາມສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານ. |

| Social Media | |
|---|---|
| **ຂໍ້ຄວາມ** | **ຮູບພາບ** |
| ທ່ານອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນບໍ?<br>ທ່ານບໍ່ສາມາດໄດ້ຮັບ full scope Medi-Cal ຍ້ອນສະຖານະຄົນເຂົ້າເມືອງຂອງທ່ານບໍ?<br>ເລີ່ມຕັ້ງແຕ່ວັນທີ 1 ພຶດສະພາ 2022, ຜູ້ຢູ່ອາໄສທັງໝົດໃນລັດ California ທີ່ມີອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນ ແລະ ຄົນທີ່ເຂົ້າເກນເງື່ອນໄຂທັງໝົດຂອງ Medi-Cal ຈະມີສິດສຳລັບ full scope Medi-Cal.<br>ສະຖານະຄົນເຂົ້າເມືອງຈະບໍ່ສຳຄັນ.<br>ເພື່ອກວດເບິ່ງວ່າທ່ານມີສິດ ຫຼື ບໍ່ ຫຼື ເພື່ອຮັບຂໍ້ມູນເພີ່ມເຕີມ, ໃຫ້ຕິດຕໍ່ສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານ.<br>ຊອກຫາສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານ. |  |

**DEPARTMENT OF HEALTH CARE SERVICES**

<table>
<tr>
<td>ທ່ານອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນບໍ?<br>ທ່ານບໍ່ສາມາດໄດ້ຮັບ full scope Medi-Cal<br>ຍ້ອນສະຖານະຄົນເຂົ້າເມືອງຂອງທ່ານບໍ?<br>ເລີ່ມຕັ້ງແຕ່ວັນທີ 1 ພຶດສະພາ 2022,<br>ຜູ້ຢູ່ອາໄສທັງໝົດໃນລັດ California ທີ່ມີອາຍຸ 50<br>ປີ ຫຼື ຫຼາຍກວ່ານັ້ນ ແລະ<br>ຄົນທີ່ເຂົ້າເກນເງື່ອນໄຂທັງໝົດຂອງ Medi-Cal<br>ຈະມີສິດສໍາລັບ full scope Medi-Cal.<br>ສະຖານະຄົນເຂົ້າເມືອງຈະບໍ່ສໍາຄັນ.<br>ເພື່ອກວດເບິ່ງວ່າທ່ານມີສິດ ຫຼື ບໍ່ ຫຼື<br>ເພື່ອຮັບຂໍ້ມູນເພີ່ມເຕີມ,<br>ໃຫ້ຕິດຕໍ່ສໍານັກງານເຂດປົກຄອງທ້ອງຖິ່ນຂອງທ່ານ.<br><u>ຊອກຫາສໍານັກງານເຂດປົກຄອງທ້ອງຖິ່ນຂອງທ່ານ</u>.</td>
<td>
</td>
</tr>
<tr>
<td>ທ່ານຮູ້ບໍວ່າ ຖ້າທ່ານເປັນຜູ້ຢູ່ອາໄສໃນລັດ California ທີ່ມີອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນ, ທ່ານອາດມີສິດສາລັບ full scope Medi-Cal ໂດຍເລີ່ມຕົ້ນຈາກວັນທີ 1 ພຶດສະພາ 2022 ບໍ່ວ່າທ່ານຈະມີສະຖານະຄົນເຂົ້າເມືອງແບບໃດ?<br>ຕິດຕໍ່ສໍານັກງານເຂດປົກຄອງທ້ອງຖິ່ນຂອງທ່ານ ແລະ<br>ຊອກຫາຂໍ້ມູນເພີ່ມເຕີມ.<br><u>ຊອກຫາສໍານັກງານເຂດປົກຄອງທ້ອງຖິ່ນຂອງທ່ານ</u>.</td>
<td>
</td>
</tr>
</table>

DEPARTMENT OF HEALTH CARE SERVICES

<table>
<tr>
<td>ເລີ່ມຕົ້ນຕັ້ງແຕ່ວັນທີ 1 ກໍລະກົດ 2022,<br>ການປ່ຽນແປງຕໍ່ຂີດຈຳກັດຊັບສິນອາດໝາຍຄວາມວ່າ<br>ທ່ານຈະສາມາດມີຊັບສິນຫຼາຍຂຶ້ນ ແລະ ຍັງຢູ່ໃນ Medi-Cal.<br>ຕິດຕໍ່ສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານສຳລັບຂໍ້ມູນເພີ່ມເຕີ<br>ມ. <u>ຊອກຫາສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານ</u>.</td>
<td>
</td>
</tr>
<tr>
<td>ເລີ່ມຕົ້ນຕັ້ງແຕ່ວັນທີ 1 ກໍລະກົດ 2022,<br>ການປ່ຽນແປງຕໍ່ຂີດຈຳກັດຊັບສິນອາດໝາຍຄວາມວ່າ<br>ທ່ານສາມາດມີສິດສຳລັບ Medi-Cal.<br>ສອບຖາມສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານ<br>ສຳລັບຂໍ້ມູນເພີ່ມເຕີມ.<br><u>ຊອກຫາສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານ</u>.</td>
<td>
</td>
</tr>
</table>

DEPARTMENT OF HEALTH CARE SERVICES

| Call Script Snippet | |
|---|---|
| **ຜູ້ໂທ** | **ຕົວແທນ** |
| "ຂີດຈຳກັດຊັບສິນທີ່ເພີ່ມຂຶ້ນ" ໝາຍຄວາມວ່າແນວໃດ? | Medi-Cal ພິຈາລະນາຊັບສິນປະເພດໃດໜຶ່ງ ເມື່ອກຳລັງກວດເບິ່ງວ່າທ່ານສາມາດໄດ້ຮັບສິດຜົນປະໂຫຍດ Medi-Cal ຫຼື ບໍ່.<br>ຂີດຈຳກັດຂອງສິ່ງຂອງທີ່ທ່ານສາມາດຄອບຄອງ (ເຊັ່ນ: ເງິນສົດ, ບັນຊີທະນາຄານ ແລະ ຊັບສິນປະເພດອື່ນໆ) ແມ່ນ $2,000 ສຳລັບໜຶ່ງຄົນ, ແຕ່ຈະຂຶ້ນສູງເຖິງ $130,000 ໃນວັນທີ 1 ກໍລະກົດ 2022. ສອບຖາມສຳນັກງານ Medi-Cal ໃນທ້ອງຖິ່ນຂອງທ່ານ<br>ຖ້າການປ່ຽນແປງເຫຼົ່ານີ້ມີຜົນບັງຄັບໃຊ້ກັບທ່ານ. [insert local county contact information] |
| Older Adult Expansion ແມ່ນຫຍັງ? | ໃນເດືອນພຶດສະພາ 2022, Older Adult Expansion ຈະຂະຫຍາຍ full scope Medi-Cal<br>ໃຫ້ແກ່ຜູ້ຢູ່ອາໄສທຸກຄົນໃນລັດ California ທີ່ມີອາຍຸ 50 ປີ ຫຼື ສູງກວ່ານັ້ນ ຖ້າບຸກຄົນດັ່ງກ່າວບັນລຸເກນເງື່ອນໄຂທັງໝົດຂອງ Medi-Cal ແລະ ສະຖານະຄົນເຂົ້າເມືອງຈະບໍ່ສຳຄັນ. |
| ຂ້າພະເຈົ້າຈະສາມາດຮັບຂໍ້ມູນເພີ່ມເຕີມກ່ຽວກັບ Older Adult Expansion ໄດ້ແນວໃດ? | ຂໍ້ມູນກ່ຽວກັບ Older Adult Expansion ແມ່ນສາມາດພົບໄດ້ໃນເວບໄຊ DHCS https://bit.ly/older-adult-expansion, ໃນ ACWDL 21-13 ຫຼື ໂດຍສົ່ງອີເມວຫາ OlderAdultExpansion@dhcs.ca.gov. |
| ແມ່ນຫຍັງຄືສິດຜົນປະໂຫຍດທີ່ສະໜອງໃຫ້ໂດຍ Older Adult Expansion? | ບຸກຄົນທີ່ມີສິດໄດ້ຮັບ full scope Medi-Cal ຍ້ອນ Older Adult Expansion ກໍ່ຈະໄດ້ຮັບສິດຜົນປະໂຫຍດ full scope ທັງໝົດທີ່ສະໜອງໃຫ້.<br><br>Full scope Medi-Cal ແຕກຕ່າງຈາກ restricted scope Medi-Cal. Restricted scope Medi-Cal ພຽງແຕ່ຄຸ້ມຄອງຈຳນວນການບໍລິການທີ່ຈຳກັດ. Restricted scope Medi-Cal ບໍ່ຄຸ້ມຄອງສິ່ງຕ່າງໆ ເຊັ່ນ: ຢາ ຫຼື ການດູແລເບິ່ງແຍງໂດຍພື້ນຖານ.<br><br>Full scope Medi-Cal<br>ໃຫ້ການດູແລເບິ່ງແຍງສຸຂະພາບຮອບດ້ານ ເຊິ່ງລວມເຖິງການຢາ, ທັນຕະກຳ, ສຸຂະພາບຈິດ, ການວາງແຜນຄອບຄົວ, ການດູແລເບິ່ງແຍງຕີນ, ການຊ່ວຍໄດ້ຍິນ ແລະ ການດູແລເບິ່ງແຍງສາຍຕາ (ແວ່ນຕາ),<br>ລວມເຖິງການບໍລິການທີ່ຊ່ວຍໃຫ້ທ່ານຍັງຢູ່ໃນເຮືອນຂອງທ່ານ ເຊັ່ນ: In-Home Supportive Services<br>ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນກິດຈະກຳປະຈຳວັນ.<br>Full scope Medi-Cal<br>ຍັງຄຸ້ມຄອງການປິ່ນປົວສຳລັບການເສບຕິດເຫຼົ້າ ແລະ |

| | |
|---|---|
| | ສານເສບຕິດ, ຢາທີ່ທ່ານໝໍຂອງທ່ານສັ່ງກາກັບ ແລະ ອື່ນໆອີກ. |

| IVR Call Script |
|---|
| ຂີດຈຳກັດຊັບສິນສຳລັບໂຄງການ Medi-Cal ຂອງທ່ານຈະເພີ່ມຂຶ້ນ ນັບຕັ້ງແຕ່ວັນທີ 1 ກໍລະກົດ 2022. ທ່ານອາດຈະສາມາດມີ ຫຼື ເກັບເງິນໄດ້ຫຼາຍຂຶ້ນ ຫຼື ຮັກສາຊັບສິນອື່ນໆ ຫຼັງຈາກທີ່ຂີດຈຳກັດເລີ່ມເພີ່ມຫຼາຍຂຶ້ນ. ໂທຫາສຳນັກງານເຂດປົກຄອງທ້ອງຖິ່ນຂອງທ່ານສຳລັບຂໍ້ມູນເພີ່ມເຕີມ. |
| ນັບຕັ້ງແຕ່ວັນທີ 1 ພຶດສະພາ 2022, ທ່ານອາດມີສິດສຳລັບ full scope Medi-Cal ຍ້ອນ Older Adult Expansion. Older Adult Expansion ຈະຂະຫຍາຍເກນເງື່ອນໄຂ full scope Medi-Cal ໃຫ້ແກ່ຜູ້ຢູ່ອາໄສທຸກຄົນໃນລັດ California ທີ່ມີອາຍຸ 50 ປີ ຫຼື ຫຼາຍກວ່ານັ້ນ ຖ້າບຸກຄົນດັ່ງກ່າວບັນລຸເກນເງື່ອນໄຂທັງໝົດຂອງ Medi-Cal ແລະ ສະຖານະຄົນເຂົ້າເມືອງຈະບໍ່ສຳຄັນ. |
| ຜູ້ສະໝັກໃໝ່ຕ້ອງສະໝັກກັບ Medi-Cal ເພື່ອກວດເບິ່ງວ່າພວກເຂົາມີສິດສຳລັບ full scope Medi-Cal ຍ້ອນ Older Adult Expansion ຫຼື ບໍ່. ຜູ້ຮັບສິດຜົນປະໂຫຍດ Medi-Cal ໃນປັດຈຸບັນຈະຖືກປ່ຽນເພື່ອເຂົ້າໃນເກນເງື່ອນໄຂ full scope ໂດຍອັດຕະໂນມັດ ແລະ ມີສິດເຂົ້າເຖິງສິດຜົນປະໂຫຍດການດູແລເບິ່ງແຍງສຸຂະພາບເພີ່ມເຕີມ ເມື່ອ Older Adult Expansion ຖືກຈັດຕັ້ງປະຕິບັດໃນວັນທີ 1 ພຶດສະພາ 2022. |